# ການສະເຫຼີມສະຫຼອງ ວັນໄປສະນີໂລກ ຄົບຮອບ 150 ປີ
# ( 9 ຕຸລາ 1874 – 9 ຕຸລາ 2024 )

## 1. ປະຫວັດຄວາມເປັນມາຂອງວັນໄປສະນີໂລກ.

ການບໍລິການໄປສະນີ ໄດ້ຢູ່ຄຽງຄູ່ກັບສັງຄົມເຮົາມາໄດ້ຫຼາຍພັນປີ, ຖ້າຫວນຄືນ 2400 ປີ ກ່ອນ ຄສ ເມື່ອຄັ້ງພະລາຊາພາໂຣ ແຫ່ງ ເອຢິບ ໄດ້ຈັດຕັ້ງຫນ່ວຍງານຈັດສົ່ງເອກະສານເຜີຍແຜ່ຂໍ້ມູນຂ່າວສານ ຂອງພະລາຊາເອງ ໄປຍັງບັນດາເມືອງຕ່າງໆ, ມາໃນສະໄຫມໂຣມັນ 500 ປີ ກ່ອນ ຄສ ພະລາຊາເຊຊ່າ ໄດ້ຈັດຕັ້ງຫນ່ວຍງານຈັດສົ່ງເອກະສານ ໂດຍນຳໃຊ້ມ້າ ເປັນພາຫະນະ, ມາໃນຍຸກລາດຊະວົງຫັນ ໃນ 200 ປີ ກ່ອນ ຄສ ກໍ່ໄດ້ສ້າງຕັ້ງປ່ອງບໍລິການໄປສະນີ 1,600 ກ່ວາແຫ່ງ ແລະ ຈ້າງແຮງງານເຖິງ 2 ຫມື່ນກ່ວາຄົນ ເພື່ອເຮັດຫນ້າທີ່ ບໍລິການຈັດສົ່ງ ຈົດຫມາຍ ແລະ ເອກະສານ.

ໃນຊຸມປີ 1654 ໄດ້ມີການນຳໃຊ້ຄຳວ່າ “ **ໄປສະນີ** ” (POST) ຊຶ່ງໄດ້ມາຈາກຄຳສັບພາສາລາແຕັງທີ່ວ່າ “ **ໂປເນ** ” ທີ່ມີຄວາມຫມາຍໃນພາສາອັງກິດທີ່ວ່າ “ **MAIL** ” ມາໃນປີ 1840 ກໍ່ໄດ້ມີການປະຕິຮູບການບໍລິການໄປສະນີ ຈາກຜູ້ດຽວເປັນຜູ້ຈັດສົ່ງ ເລີ່ມຕັ້ງແຕ່ຂັ້ນຕອນຮັບຝາກຢູ່ຕົ້ນທາງ ຈົນໄປເຖິງຂັ້ນຕອນແຈກຢາຍຢູ່ປາຍທາງ ມາເປັນການບໍລິການສົ່ງຕໍ່ (ໝາຍຄວາມວ່າຜູ້ທຳອິດຈັດສົ່ງມາຮອດເຂດໃດຫນຶ່ງ ແລ້ວຜູ້ທີ່ສອງຮັບສົ່ງຕໍ່ໄປຍັງປາຍທາງ) ຈຶ່ງມີການຄິດຄົ້ນນຳໃຊ້ສະແຕມໄປສະນີ ເພື່ອເປັນສັນຍາລັກບົ່ງບອກ ກ່ຽວກັບຄຸນລັກສະນະ, ຄວາມຕ້ອງການ ແລະ ລາຄາທີ່ຈະໄດ້ຮັບຈາກການບໍລິການແຈກຢາຍນັ້ນ ຈຶ່ງເຮັດໃຫ້ເກີດມີການບໍລິການ ຈັດສົ່ງເຄື່ອງຝາກໄປສະນີລະຫວ່າງປະເທດໄດ້. ມາຮອດປີ 1874 ກໍ່ໄດ້ມີການສ້າງຕັ້ງ ສະຫະພາບໄປສະນີລະຫວ່າງປະເທດ (international postal union) ຊຶ່ງມີ 22 ປະເທດສະມາຊິກ, ຕໍ່ມາ ໃນປີ 1878 ຈຶ່ງໄດ້ປ່ຽນຊື່ມາເປັນສະຫະພາບໄປສະນີສາກົນ (Universal Postal Union). ມາໃນປີ 1969 ກອງປະຊຸມໃຫຍ່ຂອງສະຫະພາບໄປສະນີສາກົນ ໄດ້ຈັດຂຶ້ນທີ່ນະຄອນຫຼວງໂຕກຽວ, ປະເທດຍີ່ປຸ່ນ ຊຶ່ງໄດ້ກຳນົດເອົາວັນທີ 9 ຕຸລາ ເປັນວັນໄປສະນີໂລກ ( World Post Day ) ໂດຍມີວັດຖຸປະສົງ ເພື່ອຍົກໃຫ້ເຫັນບົດບາດຄວາມສຳຄັນຂອງວຽກງານໄປສະນີ ຊຶ່ງການເຂົ້າເຖິງຕາຫນ່າງໄປສະນີ ແມ່ນສິດທິພື້ນຖານຂອງປະຊາຊົນບັນດາເຜົ່າ ແລະ ເຮັດໃຫ້ຜູ້ຄົນ ທີ່ອາໄສຢູ່ຄົນລະປະເທດ, ຕ່າງສາດສະໜາ, ຕ່າງລະບອບການເມືອງ ກໍ່ສາມາດສົ່ງຈົດໝາຍ ຕິດຕໍ່ສື່ສານຫາກັນໄດ້ ພ້ອມນັ້ນ ກໍ່ໃຫ້ຮັບຮູ້ວ່າບຸລຸດໄປສະນີ ແມ່ນບຸກຄົນທີ່ເສຍສະຫຼະຮັບໃຊ້ບໍລິການແກ່ສັງຄົມ ຊຶ່ງຈະຕ້ອງໄດ້ຮັບການປົກປ້ອງ ເປັນພິເສດ, ແມ່ນແຕ່ໃນໄລຍະສົງຄາມ ກໍ່ຫ້າມທຳຮ້າຍບູລຸດໄປສະນີ ຊຶ່ງເປັນຫຼັກການປະຕິບັດຂອງສົງຄາມທີ່ວ່າ ຫ້າມຂ້າບຸກຄົນທີ່ນຳສົ່ງຈົດໝາຍ.

## 2. ຄວາມໝາຍຄວາມສຳຄັນຂອງວຽກງານໄປສະນີ.

ໄປສະນີ ແມ່ນຂະແໜງການບໍລິການໜຶ່ງ ທີ່ປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມຂອງປະເທດໃຫ້ຈະເລີນ ເຕີບໂຕ, ທັງເຮັດໜ້າທີ່ໃນການເຊື່ອມໂຍງ ລະຫວ່າງຄົວເຮືອນ, ຮ້ານຄ້າ ແລະ ຫົວໜ່ວຍທຸລະກິດ ໃນການສື່ສານພົວພັນ ແລະ ຈໍລະຈອນແຈກຢາຍສິນຄ້າຢ່າງກ້ວາງຂວາງ ແລະ ຫຼວງຫຼາຍ, ພ້ອມທັງອຳນວຍຄວາມສະດວກໃຫ້ແກ່ການຄ້າ ,ການຊື້-ຂາຍ ແລະ ການສື່ສານ ທັງພາຍໃນ ແລະ ຕ່າງປະເທດ ຊຶ່ງບໍ່ພຽງແຕ່ເປັນຕົວກາງຂອງການເຊື່ອມໂຍງ ລະຫວ່າງ ຜູ້ສະໜອງ ແລະ ຜູ້ບໍລິໂພກ ແຕ່ຍັງປະກອບສ່ວນສຳຄັນໃນການຂັບເຄື່ອນຕະຫຼາດເສດຖະກິດດິຈິຕອນ ທີ່ຫຼາຍກິດຈະກຳເຄື່ອນໄຫວດ້ານທຸລະກິດ ຍັງອາໄສການບໍລິການຂອງຂະແໜງໄປສະນີ ໃນການໂຄສະນາເຖິງເຮືອນ, ສ້າງການພົວພັນ, ຈັດສົ່ງ ແລະ ແຈກຢາຍສິນຄ້າ ໃຫ້ແກ່ລູກຄ້າ .

ປະຈຸບັນສະພາບແວດລ້ອມພາຍໃນ ຂອງຂະແໜງໄປສະນີ ບໍ່ພຽງແຕ່ມີການປ່ຽນແປງ ແຕ່ມັນຍັງຈະເພີ່ມຄວາມສັບສົນຫຼາຍຂຶ້ນ ໃນຍຸກຂໍ້ມູນຂ່າວສານທີ່ບໍ່ມີພົມແດນ, ຍຸກຂອງການເປີດກວ້າງຕະຫຼາດ, ຍຸກຂອງການແຂ່ງຂັນ ຊຶ່ງທັງໝົດນີ້ ກໍ່ເປັນຜົນມາຈາກການປ່ຽນແປງຢ່າງໄວວາຂອງເຕັກໂນໂລຊີສື່ສານຂໍ້ມູນຂ່າວສານ. ຫຼາຍປະເທດໃນໂລກ ໄດ້ຍົກບົດບາດ

ຄວາມສຳຄັນຂະແໜງໄປສະນີໃນການສ້າງລາຍຮັບ, ການສ້າງວຽກເຮັດງານທຳ ແລະ ການບໍລິການຂອງພາກລັດຕໍ່ປະຊາຊົນ ຊຶ່ງການບໍລິການ ແລະ ຕາໜ່າງໄປສະນີຂະຫຍາຍກວ້າງອອກໄປບ່ອນໃດກໍ່ຈະຊຸກຍູ້ໃຫ້ມີການພັດທະນາເສດຖະກິດ-ສັງຄົມ ໃນຂົງເຂດນັ້ນ. ການພັດທະນາຂະແໜງໄປສະນີ ຕ້ອງໄດ້ເປີດກວ້າງໃຫ້ມີການແຂ່ງຂັນ ແລະ ຊຸກຍູ້ຊ່ວຍເຫຼືອກັນລະຫວ່າງຜູ້ປະກອບການ ເພື່ອຫຼຸດຜ່ອນການລົງທຶນໃສ່ບ່ອນທີ່ບໍ່ເກີດປະໂຫຍດ ຫຼື ເພື່ອເຮັດໃຫ້ຜູ້ຊົມໃຊ້ມີທາງເລືອກໃນການນຳໃຊ້ບໍລິການດ້ວຍລາຄາທີ່ຕົນເອງພໍໃຈ.

## 3. ສະຫະພາບໄປສະນີສາກົນ Universal Postal Union

ສະຫະພາບໄປສະນີສາກົນ ເປັນອົງການຈັດຕັ້ງຫນຶ່ງ ຢູ່ໃນອົງການສະຫະປະຊາຊາດ ສ້າງຕັ້ງຂຶ້ນ ໂດຍມີ ຈຸດປະສົງເພື່ອຈັດລະບົບການໃຫ້ບໍລິການ ແລະ ປັບປຸງກິດຈະການໄປສະນີລະຫວ່າງປະເທດ ໃຫ້ມີ ປະສິດທິພາບ, ມີສຳນັກງານໃຫຍ່ຕັ້ງຢູ່ ນະຄອນຫຼວງ ເບີນ ປະເທດ ສະວິດເຊີແລນ ປະຈຸບັນມີ ປະເທດສະມາຊິກທັງຫມົດ 192 ປະເທດ, ເປັນອົງການຈັດຕັ້ງທີ່ເກົ່າແກ່ທີ່ສຸດ ອັນທີ່ສອງຂອງໂລກ. ປະກອບດ້ວຍ 4 ອົງການຈັດຕັ້ງຫຼັກ ຄື: ລັດຖະສະພາ Congress, ສະພາບໍລິຫານ Council of Administration, ສະພາປະຕິບັດການໄປສະນີ Postal Operations Council ແລະ ສຳນັກງານລະຫວ່າງປະເທດ International Bureau.

### 3.1 ລັດຖະສະພາ (Congress)

ເປັນການປະຊຸມອົງກອນສູງສຸດຂອງສະຫະພາບໄປສະນີສາກົນ ປະກອບດ້ວຍຜູ້ແທນຈາກປະເທດສະມາຊິກ ຈຳນວນທັງຫມົດ 192 ປະເທດ ເປີດປະຊຸມທຸກໆ 4 ປີ ເພື່ອກຳນົດ ນະໂຍບາຍດ້ານກິດຈະການໄປສະນີລະຫວ່າງປະເທດ, ປັບປຸງແກ້ໄຂລະບຽບການຕ່າງໆ ແລະ ເລືອກຕັ້ງຜູ້ບໍລິຫານຂອງສະຫະພາບໄປສະນີ ຕະຫຼອດຈົນເລືອກຕັ້ງສະມາຊິກສະພາບໍລິຫານ ແລະ ສະມາຊິກສະພາປະຕິບັດການໄປສະນີ. ກອງປະຊຸມໃຫຍ່ຂອງສະຫະພາບໄປສະນີຄັ້ງທີ 27 ຄັ້ງລ່າສຸດໄດ້ຈັດຂຶ້ນທີ່ນະຄອນຫຼວງ Abidjan ປະເທດ Côte d'Ivoire ລະຫວ່າງວັນທີ 9-27 ສິງຫາ 2021.

### 3.2. ສະພາບໍລິຫານ (Council of Administration, CA)

ເປັນອົງກອນທີ່ສຳຄັນ ທີ່ເບິ່ງແຍງດ້ານນະໂຍບາຍຂອງສະຫະພາບໄປສະນີສາກົນ ປະກອບດ້ວຍປະເທດສະມາຊິກທີ່ໄດ້ຮັບການເລືອກຕັ້ງ ຈາກທີ່ປະຊຸມ ໃຫຍ່ຈຳນວນ 41 ປະເທດ ຊຶ່ງຈະຈັດໃຫ້ມີການປະຊຸມທຸກໆປີ ເພື່ອສຶກສານະໂຍບາຍ ແລະ ນິຕິກຳ ໃນການບໍລິຫານກິດຈະການໄປສະນີ, ພິຈາລະນາ ຂໍ້ສະເຫນີຂອງສະພາປະຕິບັດການໄປສະນີໃນການປັບປຸງນິຕິກຳ, ລວມທັງພິຈາລະນາ ແລະ ໃຫ້ຄວາມເຫັນດີດ້ານການເງິນ, ງົບປະມານ ແລະ ການໃຫ້ຄວາມຊ່ວຍເຫຼືອທາງດ້ານເຕັກນິກແກ່ບັນດາປະເທດສະມາຊິກຂອງສະຫະພາບ.

### 3.3 ສະພາປະຕິບັດການໄປສະນີ (Postal Operations Council, POC)

ເປັນອົງກອນທາງດ້ານເຕັກນິກ ແລະ ການປະຕິບັດການຂອງສະຫະພາບໄປສະນີສາກົນ ປະກອບດ້ວຍປະທດສະມາຊິກ ຈຳນວນ 40 ປະເທດ, ມີການປະຊຸມທຸກໆປີເຊັ່ນດຽວກັນກັບສະພາບໍລິຫານ ເພື່ອສຶກສາບັນຫາທາງເຕັກນິກດ້ານປະຕິບັດການກິດຈະການທາງການຄ້າ, ງານວິຊາ ການ ແລະ ເສດຖະກິດ ແລະ ຄວາມຮ່ວມມືກ່ຽວກັບບໍລິການໄປສະນີ ຕະຫຼອດຈົນສຶກສາສະຖານະການ ປະຈຸບັນ ແລະ ຄວາມຕ້ອງການທາງດ້ານບໍລິການໄປສະນີ ໃນປະເທດທີ່ກຳລັງພັດທະນາ ແລະ ສະເຫນີວິທີ ການປັບປຸງບໍລິການໄປສະນີໃນປະເທດເຫຼົ່ານັ້ນ, ດຳເນີນມາດຕະການທີ່ຈຳເປັນ ເພື່ອໃຫ້ມີການສຶກສາ ເຜີຍແຜ່ປະສົບການຄວາມກ້າວຫນ້າທາງດ້ານເຕັກນິກ ແລະ ການຝຶກອົບຮົມວິຊາການໄປສະນີໃນບາງປະ ເທດ ລວມທັງພິຈາລະນາບັນຫາຂອງສະພາບໍລິຫານ, ສະພາປະຕິບັດການໄປສະນີ ຫຼື ປະເທດສະມາຊິກ ຂອງສະຫະພາບ.

### 3.4 ສຳນັກງານລະຫວ່າງປະເທດ (International Bureau, IB)

ເປັນສຳນັກງານໃຫຍ່ຂອງສະຫະພາບໄປສະນີສາກົນ ຕັ້ງຢູ່ນະຄອນຫຼວງ ເບີນ ປະເທດ ສະວິດເຊີແລນ ປະຈຸບັນແມ່ນທ່ານ Masahiko Metoki ຈາກປະເທດ Japan ເປັນ ເລຂາທິການໃຫຍ່ ແລະ ທ່ານ Marjan OSvald ຈາກປະເທດ Slovenia ເປັນຮອງເລຂາທິການ, ມີພະນັກງານ ຊ່ວຍວຽກປະມານ 250 ຄົນ ຈາກ 50 ປະເທດສະມາຊິກ, ເຮັດໜ້າທີ່ເປັນສຳນັກງານປະສານງານດ້ານຂໍ້ມູນຂ່າວສານ, ໃຫ້ຄຳປຶກສາ ແລະ ສົ່ງເສີມການຮ່ວມມືໃຫ້ແກ່ບັນດາປະເທດສະມາຊິກ..

ຜູ້ປະສານງານຂອງສຳນັກງານລະຫວ່າງປະເທດ ສາມາດໃຫ້ຄຳປຶກສາດ້ານໄປສະນີ ໃຫ້ແກ່ບັນດາປະເທດທີ່ກຳລັງພັດທະນາ ໃນການວາງແຜນ, ການຕຽມການ, ການຈັດຕັ້ງປະຕິບັດ ແລະ ຕິດຕາມ ໂຄງການພັດທະນາໄປສະນີໃນຂົງເຂດຂອງໄປສະນີ ໂດຍຜ່ານສູນເຕັກໂນໂລຊີໄປສະນີຂອງສະຫະພາບ ໄດ້ຈັດ ຕັ້ງສູນບໍລິການລະດັບຂົງເຂດຫຼາຍແຫ່ງໃນສ່ວນຕ່າງໆຂອງໂລກ ເພື່ອສະໜັບສະໜູນກິດຈະກຳຕ່າງໆດ້ານ ຂໍ້ມູນຂ່າວສານ, ບັນດາສູນເຫຼົ່ານັ້ນໄດ້ມີການປັບໃຊ້ ແລະ ສະໜັບສະໜູນການນຳໃຊ້ເຄື່ອງມື, ຜະລິດຕະພັນ ແລະ ການບໍລິການ ເຕັກໂນໂລຊີຕ່າງໆ ຂອງສະຫະພາບ ເຂົ້າໃນຂົງເຂດຂອງຕົນ.

## 4. ການແບ່ງກຸ່ມ ປະເທດສະມາຊິກຂອງສະຫະພາບໄປສະນີສາກົນ

ໃນຈຳນວນ 192 ປະເທດສະມາຊິກ ໄດ້ແບ່ງອອກເປັນ 5 ກຸ່ມ ຄື:

1) ກຸ່ມປະເທດ ໃນອາເມລິກາ ມີ 36 ປະເທດ
2) ກຸ່ມປະເທດ ໃນອາຊີໃຕ້ ແລະ ໂອເຊອານີ ມີ 49 ປະເທດ
3) ກຸ່ມປະເທດ ໃນຢູໂຣບຕາເວັນຕົກ ມີ 28 ປະເທດ
4) ກຸ່ມປະເທດ ໃນຢູໂຣບຕາເວັນອອກ ແລະ ອາຊີເໜືອ ມີ 25 ປະເທດ
5) ກຸ່ມປະເທດ ໃນອາຟຼິກກາ ມີ 54 ປະເທດ.

## 5. ອົງການໄປສະນີ ທີ່ ສປປ ລາວ ເຂົ້າເປັນສະມາຊິກ

ສ ປປ ລາວ ໄດ້ເຂົ້າເປັນສະມາຊິກ 4 ອົງການໄປສະນີ ຄື:

| | |
|---|---|
| - ສະຫະພາບໄປສະນີສາກົນ | ມີ 192 ປະເທດ |
| - ສະຫະພາບ ໄປສະນີ ອາຊີ ປາຊີຟິກ | ມີ 32 ປະເທດ |
| - ກຸ່ມໄປສະນີ ອາຊີ ປາຊີຟິກ | ມີ 28 ປະເທດ |
| - ໄປສະນີ ອາຊຽນ | ມີ 10 ປະເທດ. |